**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາປະຊາຊົນ ແຂວງໄຊຍະບູລີ

ເລກທີ...51../ສພຂ.ຊຍ
ໄຊຍະບູລີ, ວັນທີ.28.ສິງຫາ 2023

# ມະຕິ
# ກອງປະຊຸມສະພາປະຊາຊົນ ແຂວງໄຊຍະບູລີ ວ່າດ້ວຍການຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານ ກາງສະໄໝ ຂອງແຜນການ 5 ປີ (2021-2025) ແລະ ທິດທາງແຜນການທ້າຍສະໄໝ ຂອງສານປະຊາຊົນແຂວງ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ) ປີ 2015 ມາດຕາ 77 ກ່ຽວກັບ ສິດ ແລະ ໜ້າທີ່ ຂອງສະພາປະຊາຊົນຂັ້ນແຂວງ;
- ອີງຕາມ ບົດລາຍງານ ຂອງສານປະຊາຊົນແຂວງ ສະບັບເລກທີ 257/ສປຊ.ຊຍ, ລົງວັນທີ 22 ສິງຫາ 2023 ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ກາງສະໄໝຂອງແຜນການ 5 ປີ (2021-2025) ທິດທາງແຜນການທ້າຍສະໄໝ.

ຜ່ານການຄົ້ນຄວ້າ, ພິຈາລະນາ ແລະ ປະກອບຄຳເຫັນຢ່າງເລິກເຊິ່ງ ຂອງສະມາຊິກສະພາປະຊາຊົນແຂວງ ຕໍ່ບົດລາຍງານການເຄື່ອນໄຫວວຽກງານກາງສະໄໝ ຂອງແຜນການ 5 ປີ (2021-2025) ແລະ ທິດທາງແຜນການເຄື່ອນໄຫວວຽກງານທ້າຍສະໄໝ ຂອງສານປະຊາຊົນແຂວງ ໃນວາລະກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາປະຊາຊົນແຂວງໄຊຍະບູລີ ຊຸດທີ II ວັນທີ 25 ສິງຫາ 2023.

## ກອງປະຊຸມ ຕົກລົງ:

**ມາດຕາ 1 ຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານ ໄລຍະກາງສະໄໝ (2021-2023)**

ກອງປະຊຸມສະແດງຄວາມຊົມເຊີຍ ຕໍ່ສານປະຊາຊົນແຂວງ ທີ່ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດສິດ ແລະ ໜ້າທີ່, ຂອບເຂດຄວາມຮັບຜິດຊອບ ຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ ໃນສະພາບຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ດ້ວຍຄວາມຮັບຜິດຊອບສູງເຮັດໃຫ້ແຜນວຽກຈຸດສຸມ 5 ປີ ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີຜົນສຳເລັດ ແລະ ມີການຫັນປ່ຽນດີຂຶ້ນ, ອັນພົ້ນເດັ່ນ ໄດ້ສຸມໃສ່ສຶກສາອົບຮົມການເມືອງ-ແນວຄິດ ຍົກລະດັບຄວາມຮູ້, ຄວາມສາມາດທາງດ້ານທິດສະດີ, ວິຊາສະເພາະ,ຈັນຍາບັນ-ຈັນຍາທຳ ໃຫ້ແກ່ຜູ້ພິພາກສາ ແລະ ພະນັກງານ-ລັດຖະກອນ,ໄດ້ເອົາໃຈ ໃສ່ປັບປຸງກົນຈັກການຈັດຕັ້ງ, ແບບແຜນວິທີເຮັດວຽກ, ບັນຈຸຊັບຊ້ອນ, ເລື່ອນຊັ້ນ, ເລື່ອນຂັ້ນໃຫ້ຜູ້ພິພາກສາ, ພະນັກງານ-ລັດຖະກອນ ຂອງສານປະຊາຊົນແຂວງ, ເຂດ ສຳເລັດໂດຍພື້ນຖານ, ພັດທະນາພື້ນຖານໂຄງລ່າງ ແລະ ວັດຖຸເຕັກນິກເຮັດໃຫ້ການເຄື່ອນໄຫວວຽກງານມີຜົນສຳເລັດຫຼາຍດ້ານ ເປັນຕົ້ນ: ໄດ້ເອົາໃຈໃສ່ຕັດສິນ ແລະ ພິພາກສາຄະດີດ້ວຍຄວາມຮັບຜິດຊອບສູງ ເຊິ່ງສະແດງອອກ ໄລຍະກາງສະໄໝ (2021-2023) ຜ່ານມາຢູ່ສານປະຊາຊົນແຂວງ ແລະ ສານປະຊາຊົນເຂດ ມີຄະດີຄ້າງມາທັງໝົດ 48 ເລື່ອງ, ເຂົ້າໃໝ່ 1.680 ເລື່ອງ, ລວມຄະດີທັງ

ໝົດ 1.728 ເລື່ອງ, ສາມາດແກ້ໄຂໄດ້ 1.642 ເລື່ອງ, ເທົ່າກັບ 95,02% ທຽບໃສ່ແຜນການແມ່ນລື່ນຄາດໝາຍທີ່ວາງໄວ້.

ຖຽງຄູ່ກັນນັ້ນ ກອງປະຊຸມເຫັນວ່າຍັງມີບາງວຽກງານຈຳນວນໜຶ່ງ ທີ່ສານປະຊາຊົນແຂວງ ຈະຕ້ອງໄດ້ປັບປຸງແກ້ໄຂເປັນຕົ້ນ: ການພິຈາລະນາຄະດີທີ່ເຂົ້າມາສານ ຈຳນວນໜຶ່ງຍັງຊັກຊ້າ ຍັງບໍ່ຖືກຕ້ອງຕາມກຳນົດເວລາທີ່ກົດໝາຍກຳນົດໄວ້, ການເກັບກຳຂໍ້ມູນ, ການສັ່ງຊາ, ຕີລາຄາ, ວິໄຈຂໍ້ມູນຫຼັກຖານ ຍັງບໍ່ທັນຮອບດ້ານ, ຄົບຖ້ວນ, ຍັງບໍ່ຮັບປະກັນໃຫ້ຄູ່ຄວາມ, ບຸກຄົນທີສາມໄດ້ໂຕ້ແຍ່ງ-ໂຕ້ຖຽງກັນເທົ່າທີ່ຄວນ, ການຕິດຕາມກວດກາ, ຊຸກຍູ້ການພິຈາລະນາຄະດີຂອງສານປະຊາຊົນເຂດຍັງບໍ່ທັນປົກກະຕິຕໍ່ເນື່ອງ ເຮັດໃຫ້ການພິຈາລະນາຄະດີບາງເລື່ອງຢູ່ສານປະຊາຊົນເຂດມີການຂໍອຸທອນ, ສານຂັ້ນອຸທອນໄດ້ພິພາກສາລົບລ້າງທັງໝົດ ຫຼື ບາງສ່ວນ.

**ມາດຕາ 2 ຮັບຮອງເອົາທິດທາງແຜນການທ້າຍສະໄໝ (2023-2025)**

ກອງປະຊຸມເຫັນດີຮັບຮອງເອົາບັນດາເນື້ອໃນທີ່ກຳນົດໄວ້ ໃນຄາດໝາຍສູ້ຊົນ ແລະ ທິດທາງແຜນການຈຸດສຸມ ຂອງສານປະຊາຊົນ ແຕ່ກອງປະຊຸມສະເໜີໃຫ້ ສານປະຊາຊົນແຂວງ ເອົາໃຈໃສ່ ດັ່ງນີ້:

1. ສຶກສາອົບຮົມການເມືອງ-ແນວຄິດໃຫ້ຜູ້ພິພາກສາ ແລະ ພະນັກງານ ຂອງສານໃຫ້ມີຄຸນທາດການເມືອງ, ມີຈັນຍາບັນ-ຈັນຍາທຳ, ນ້ຳໃຈຮັກຊາດ ຮັບໃຊ້ປະຊາຊົນ, ມີສະຕິເຄົາລົບປະຕິບັດກົດໝາຍຢ່າງເຂັ້ມງວດ;

2. ເອົາໃຈໃສ່ຊຸກຍູ້, ກວດກາການປະຕິບັດໜ້າທີ່ ແລະ ມີມາດຕະການປະເມີນຜູ້ພິພາກສາ ແລະ ພະນັກງານໃຫ້ມີຄຸນນະພາບ ໂດຍຖືເອົາການປະເມີນຜູ້ພິພາກສາດີ-ເກັ່ງໃຫ້ໄດ້ 25% ຂຶ້ນໄປໃນແຕ່ລະປີຂອງຜູ້ພິພາກສາທັງໝົດ;

3. ຍົກລະດັບຄວາມຮູ້, ຄວາມສາມາດຂອງຜູ້ພິພາກສາ, ພະນັກງານ-ລັດຖະກອນ ຂອງສານປະຊາຊົນທາງດ້ານວິຊາສະເພາະ ວິຊາການ, ທິດສະດີ ໃຫ້ເລິກເຊິ່ງ ແລະ ເປັນມືອາຊີບ, ຮັບປະກັນໃນການດຳເນີນຄະດີຂອງສານ ມີຄວາມຄົບຖ້ວນ,ຮອບດ້ານ ແລະ ພາວະວິໄສ, ເຮັດໃຫ້ການພິຈາລະນາຕັດສິນມີຄວາມວ່ອງໄວ, ໂປ່ງໃສ, ຖືກຕ້ອງ ແລະ ຍຸຕິທຳ. ການພິຈາລະນາແກ້ໄຂຄະດີໃຫ້ ບັນລຸ 85% ຂຶ້ນໄປ ແລະ ຮັບປະກັນການຕັດສິນຄະດີມີຄຸນນະພາບ ອັດຕາການຂໍອຸທອນ ບໍ່ໃຫ້ເກີນ 15% ຕໍ່ປີ;

4. ເພີ່ມທະວີການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ກັບການດຳເນີນຄະດີໃຫ້ມີຄວາມຄ່ອງຕົວ ແລະ ກົມກຽວ ເພື່ອຮັບປະກັນໃຫ້ດຳເນີນຄະດີມີຄວາມຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສ; ຮັບປະກັນການບໍລິຫານສານ-ບໍລິຫານຄະດີໃຫ້ມີຄຸນນະພາບ ແລະ ປະສິດທິພາບສູງ, ມີພື້ນຖານວັດຖຸເຕັກນິກທີ່ທັນສະໄໝ, ມີພາຫະນະຮັບໃຊ້ໃນການເກັບກຳຂໍ້ມູນຫຼັກຖານ ແລະ ການເຮັດສານເຄື່ອນທີ່ຕັດສິນຄະດີ;

5. ສືບຕໍ່ຮ່ວມມືກັບສາກົນຕາມແນວທາງການຕ່າງປະເທດຂອງພັກ ແລະ ສະເໜີນຳຂັ້ນເທິງສາຍຕັ້ງເພື່ອຂໍແຂວງແຮກສ່ຽວກັບສານແຂວງໃດໜຶ່ງ ຂອງ ສສ ຫວຽດນາມ.

**ມາດຕາ 3 ຮັບຮອງເອົາບັນດາມາດຕະການຈັດຕັ້ງປະຕິບັດ**

ກອງປະຊຸມເຫັນດີເປັນເອກະພາບ ຕໍ່ 4 ມາດຕະການຈັດຕັ້ງປະຕິບັດ ທີ່ສານປະຊາຊົນແຂວງ ໄດ້ກຳນົດໄວ້ໃນບົດລາຍງານ ແຕ່ກອງປະຊຸມສະເໜີບາງມາດຕະການເພີ່ມຕື່ມ ດັ່ງນີ້:

1. ເພີ່ມທະວີຄວາມຮັບຜິດຊອບການເມືອງ ຂອງຄະນະພັກ-ຄະນະນຳສານປະຊາຊົນແຂວງ ໃນການນຳພາ-ຊີ້ນຳການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມກົດໝາຍທີ່ກຳນົດໄວ້, ເປັນແບບຢ່າງໃນການເຄົາລົບ ແລະ ປະຕິບັດກົດໝາຍຢ່າງເຂັ້ມງວດ, ເອົາໃຈໃສ່ຕິດຕາມກວດກາການປະຕິບັດໜ້າທີ່ຂອງຜູ້ພິພາກສາ ແລະ ຕີລາຄາປະເມີນຜູ້ພິພາກສາ ຊອກໃຫ້ໄດ້ຜູ້ພິພາກສາດີ-ເກັ່ງ, ພ້ອມທັງມີມາດຕະການຕໍ່ຜູ້ທີ່ມີເຈດຕະນາລະເມີດກົດໝາຍຢ່າງເຂັ້ມງວດ ແລະ ເດັດຂາດ;

2. ນຳພາ-ຊີ້ນຳການຈັດຕັ້ງຜັນຂະຫຍາຍທິດທາງແຜນການທ້າຍສະໄໝ (2023-2025) ໃຫ້ເປັນແຜນງານ, ໂຄງການ, ກິດຈະກຳລະອຽດໃນແຕ່ລະດ້ານ ແລະ ມີການຕິດຕາມກວດກາ, ສະຫຼຸບຕີລາຄາ ແລະ ລາຍງານການເຄື່ອນໄຫວໃນແຕ່ລະໄລຍະໃຫ້ຂັ້ນເທິງຢ່າງເປັນປົກກະຕິ;

3. ຍົກລະດັບທາງດ້ານວິຊາສະເພາະ, ທິດສະດີການເມືອງ-ການປົກຄອງ, ຄວາມຮູ້, ຄວາມສາມາດ, ທັກສະ, ໄຫວພິບ ໃນການຄົ້ນຄວ້າຄະດີ, ເອົາໃຈໃສ່ໃນການນຳໃຊ້ບັນດາມາດຕະການທີ່ໄດ້ກຳນົດໄວ້ໃນກົດ

ໝາຍ ເພື່ອຮັບປະກັນການເກັບກຳຂໍ້ມູນຫຼັກຖານ, ການໂຕ້ແຍ່ງ-ໂຕ້ຖຽງໃຫ້ຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ ເຮັດໃຫ້ການດຳເນີນຄະດີໃຫ້ມີຄວາມວ່ອງໄວ, ໂປ່ງໃສ, ຖືກຕ້ອງ ຮັບປະກັນໃຫ້ມີຄວາມຍຸຕິທຳໃນສັງຄົມ;

4. ເພີ່ມທະວີການຕິດຕາມກວດກາການດຳເນີນຄະດີຢູ່ສານປະຊາຊົນແຂວງ, ເຂດຢ່າງເປັນປົກກະຕິຕໍ່ເນື່ອງ ເພື່ອເຮັດໃຫ້ການດຳເນີນຄະດີມີຄວາມຖືກຕ້ອງຕາມກົດໝາຍ ແລະ ຄວາມເປັນຈິງ, ຫຼີກລ່ຽງການພິຈາລະນາຄະດີຫຼີບໄປຫຼີບມາຫຼາຍເທື່ອ;

5. ສືບຕໍ່ເອົາໃຈໃສ່ຂອດປະສານສົມທົບ, ປຶກສາຫາລື ແລະ ຂໍທິດຊີ້ນຳກັບຄະນະພັກ, ອຳນາດການປົກຄອງທ້ອງຖິ່ນ, ສະພາປະຊາຊົນແຂວງ ເພື່ອຮັບປະກັນໃນການບໍລິຫານສານ ແກ້ໄຂຄະດີ ໃຫ້ມີການພັດທະນາດີຂຶ້ນກວ່າເກົ່າ.

**ມາດຕາ 4 ການຈັດຕັ້ງປະຕິບັດ**

1. ມອບໃຫ້ສານປະຊາຊົນແຂວງ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ;

2. ມອບໃຫ້ຄະນະປະຈຳສະພາປະຊາຊົນແຂວງ, ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບສະພາປະຊາຊົນແຂວງ ຕິດຕາມກວດກາ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດມະຕິສະບັບນີ້ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 5 ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານສະພາປະຊາຊົນແຂວງ**

**ເພັງມີລັນ ຄຳພັນເພັງ**